# ຮ່ວມໃຈກັນຕ້ານພະຍາດ

*ພວກເຮົາ ເຍົາວະຊົນຍຸກໃໝ່
ມາຮ່ວມໃຈ ອະນາໄມສິ່ງເສດເຫຼືອ
ເພາະເປັນທາດເບື່ອ ຕໍ່ສະຂະພາບຮ່າງກາຍ
ທັງຍິງແລະຊາຍ ມາເຮົາມາຊ່ວຍກັນ

*ພວກເຮົາ ຕ້ອງໄດ້ຂະຫຍັນ
ຈົ່ງຊ່ວຍກັນ ຖິ້ມໃສ່ຖັງອະນາໄມ
ຄອບຄົວເຮົາ ມີຄວາມສຸກເຫຼືອໃຈ
ຈຶ່ງປອດໄພ ຈາກພະຍາດໂລຄາ

*ມາເພື່ອນມາ ພ້ອມກັນມາສ້າງສາ
ພັດທະນາ ບ້ານເມືອງເຮົາ
ທຸກເຊົ້າທຸກແລງ ພ້ອມກັນມາອອກ
ແຮງ
ອະນາໄມຊ່ວຍກັນ ອະນາໄມຊ່ວຍກັນ

# ເຊີນຊວນລ້າງມື

*ມືມືມື ມືເຮົາເປັນສິ່ງປະເສີດ
ທຸກຄົນກຳເນີດ ຕ້ອງມີມືທັງສອງ
ມືນີ້ ບໍ່ແມ່ນສິ່ງທົດລອງ
(ຊ້ຳ)
ມືນີ້ແມ່ນຂອງ ເກີດມາພ້ອມເຮົາ

*ພວກເຮົາ ຄວນເອົາໃຈໃສ່
ໝັ່ນອະນາໄມ ມືໃຫ້ສະອາດດີ
ລ້າງມືຫຼັງໃຊ້ວິດຖ່າຍ
ລ້າງມືກ່ອນຈະກິນເຂົ້າ
ບໍ່ແມ່ນຄຳເວົ້າ ຍອກຫຼິ້ນດອກນາ

*ລູກຫຼານ ລຸງປ້າອາວອາ
ຈົ່ງຊ່ວຍກັນຮັກສາ ມືຂອງຕົນເອງ
ເພື່ອປາສະຈາກ ພະຍາດໂລຄາ (ຊ້ຳ)

ໂຕມັນຈະມາ

ທຳລາຍຮ່າງກາຍ